# ບຸກຄົນສຳລັບຕິດຕໍ່ນອກເຂດພື້ນທີ່

**ລະບົບໂທລະສັບມັກຈະບໍ່ວ່າງ ຫຼັງຈາກເກີດໄພພິບັດ, ສ່ວນຫຼາຍກໍເນື່ອງຈາກມີຄົນໃຊ້ລະບົບໂທລະສັບຫຼາຍໂພດ.**

- ປິດເຄື່ອງໂທລະສັບ, ທັງໂທລະສັບມືຖື ແລະໂທລະສັບໃນເຮືອນ, ເປັນເວລາຢ່າງໜ້ອຍ 3-5 ຊົ່ວໂມງ ຫຼັງເກີດໄພພິບັດ, **ເວັ້ນແຕ່ວ່າທ່ານຈຳເປັນຕ້ອງໂທ 911 ສຳລັບເຫດການທີ່ເປັນອັນຕະລາຍເຖິງຊີວິດ.**
- ສາຍໂທທາງໄກແມ່ນໃຊ້ການໄດ້ດີກວ່າສາຍໂທໃນພື້ນທີ່ ຫຼັງຈາກເກີດໄພພິບັດ. ຈິ່ງຂໍໃຫ້ເພື່ອນ ຫຼື ຍາດພີ່ນ້ອງທີ່ອາໄສຢູ່ນອກຣັຖວໍຊິງຕັນ ເປັນ "ບຸກຄົນສຳລັບຕິດຕໍ່ຂອງຄອບຄົວ" ຂອງທ່ານ. ບຸກຄົນສຳລັບຕິດຕໍ່ຂອງຄອບຄົວຈະກາຍເປັນຈຸດກະຈາຍຂໍ້ມູນກັບສະມາຊິກຄົນອື່ນໃນຄອບຄົວ. ແຜນການຂອງທ່ານຂຶ້ນກັບທຸກຄົນທີ່ຮູ້ຈັກເບີໂທລະສັບຕິດຕໍ່ນອກເຂດພື້ນທີ່ຂອງທ່ານ.
- ໃຫ້ເຮັດວຽກຕໍ່ໄປນີ້ໃຫ້ແລ້ວພາຍໃນສາມວັນຖັດໄປ ຫຼື ໄວກວ່ານັ້ນ!



ເລືອກບຸກຄົນສຳລັບຕິດຕໍ່ນອກຣັຖ ແລະຕື່ມຂໍ້ມູນຕໍ່ໄປນີ້:

ຊື່ບຸກຄົນສຳລັບຕິດຕໍ່ຂອງຄອບຄົວທີ່ຢູ່ນອກພື້ນທີ່____________________________

(____) ____________________ (ກາງເວັນ) (____) ____________________ (ຍາມແລງ)

(ອີເມວ)______________________________________________________

ແບ່ງປັນຂໍ້ມູນນີ້ກັບຄົນໃນຄອບຄົວຂອງທ່ານ, ໂຮງຮຽນຂອງລູກທ່ານ, ແລະຫ້ອງການຂອງທ່ານ. ຫ້ອງການຈັດການເຫດສຸກເສີນແຫ່ງຣັຖອໍຣິກອນ ມີ "ບັດສຳລັບຕິດຕໍ່ນອກເຂດພື້ນທີ່" ຊຶ່ງພິມໄວ້ໃນທ່ານນຳໃຊ້ໄດ້. ໂທຖາມທີ່ 206-233-7123

